ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

# ເບິ່ງຫົວຊ້າງໃຫ້ເຫັນຫາງ

ຂຽນໂດຍ: ເອກວິໄນ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

VILLAGE FOCUS INTERNATIONAL

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

**Rights-LINK**


| | |
|---|---|
| ລິຂະສິດໃນການຈັດພິມ | ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ (Rights- LINK Lao Project) ແລະ ອົງການບ້ານຈຸດສຸມສາກົນ (VFI) |
| ຂຽນໂດຍ | ທ່ານ ດາວວົງ ພົມພັກດີ |
| ຮູບ | |
| ຜູ້ກວດແກ້ ແລະ ຮຽບຮຽງພາສາ | ທ່ານ ຫນູພັນ ມະຫາພົນ ແລະ ທ່ານ ນາງ ຄຳຫລ້າ ພຸດທະລາດ |
| ຈັດພິມຄັ້ງທີ | |
| ສະໜັບສະໜູນການຈັດພິມໂດຍ | ອົງການເອັດສ໌ດີຊີ |
| ຈັດພິມທີ | ໂຮງພິມປານຄຳ |
| ທະບຽນພິມເລກທີ | |


**ສະຫງວນລິຂະສິດ**

# ບົດນຳ

| | | |
|---|---|---|
| ບູຮານ | ກ່າວໄວ້ | ຫຼິງເບິ່ງຫົວຊ້າງໃຫ້ເຫັນຫາງ |
| ໝາຍຫວັງ | ສອນລູກຫຼານ | ຈົ່ງຫຼໍ່າບັນຫາໃຫ້ຖີ່ຖ້ວນ |
| ທຸກຂະບວນ | ການຕັດສິນໃຈໃຫ້ໄຈ້ | ນັບແຕ່ປາຍໃຫ້ເຖິງກົກ |
| ຖົກບັນຫາ | ທຸກສາຍເຫດຢ່າງແຈ່ມແຈ້ງ | ຈຶ່ງນຳມາແກ້ທຸກປ່ອງແປວ ຊອບແລ້ວ |

ຄຳສອນ “ເບິ່ງຫົວຊ້າງໃຫ້ເຫັນຫາງ” ເປັນຄຳແນະນຳມາແຕ່ປູ່ແຕ່ປຸ້ຍບໍ່ຈັກວ່ານານເທົ່າໃດມາແລ້ວ.ແຕ່ວ່າ, ການເວລາບໍ່ໄດ້ເຮັດໃຫ້ຄວາມໝາຍຂອງຄຳສອນເສື່ອມລົງຊໍ້າບໍ່ໜ້ຳຄຸນຄ່າທາງດ້ານເນື້ອໃນຍິ່ງດົນນານ ຍິ່ງມີຄວາມໝາຍເລິກເຊິ່ງ ແລະ ຍັງຄົງພາວະວິໄສເທົ່າທຸກວັນນີ້. ດັ່ງໃນບົດກອນວັກໜຶ່ງຂ້າງເທິງນີ້ກໍໄດ້ ອະທິບາຍໃຫ້ເຫັນແຈ້ງກ່ຽວກັບເນື້ອໃນຂອງຄຳສອນວ່າເບິ່ງຫົວຊ້າງໃຫ້ເຫັນຫາງ. ຊ້າງເປັນສັດໂຕໃຫຍ່ມີ ບາລະມີສູງສົ່ງເປັນເຄື່ອງໝາຍແຫ່ງການປົກຄອງ ແລະ ເປັນພາຫະນະທຳເສິກສົງຄາມຄູ່ພະລາຊາຕັ້ງແຕ່ ບູຮານນະການ. ການຈະເບິ່ງຊ້າງໃຫ້ເຫັນຫາງນັ້ນເປັນໄປໄດ້ຍາກເພາະຊ້າງມີຫູໃຫຍ່,ໂຕໃຫຍ່, ກົ້ນໃຫຍ່ ພັດຫາງນ້ອຍຈຶ່ງຖືກບັງໝົດ.ໃນຄວາມໝາຍທາງກົງຂອງຄຳສອນນັ້ນ,ການເບິ່ງຫົວຊ້າງໃຫ້ເຫັນຫາງ, ຕ້ອງໃຊ້ວິຊາອາຄົມ, ວິຈາລະນະຍານຫຼິງມອງໃຫ້ລະອຽດຈຶ່ງຈະເຫັນຫາງ. ຖ້າປຽບຄວາມໝາຍທາງອ້ອມ ກໍໝາຍຄວາມວ່າ ການເບິ່ງບັນຫາໃຫຍ່ໆຕ້ອງເບິ່ງຜົນໃຫ້ເຫັນເຫດນັ້ນເອງ.ການເບິ່ງຜົນໃຫ້ເຫດກໍໝາຍຄ ວາມວ່າຜູ້ມີອຳນາດໃນການປົກຄອງເວລາຈະຕັດສິນບັນຫາໃຫຍ່ໆໃດໆຕ້ອງເບິ່ງໃຫ້ຖີ່ຖ້ວນຕາມລະບຽບ ກົດໝາຍ, ຄວາມເໝາະສົມໃນແຕ່ລະໄລຍະ ແລະ ໃຫ້ເບິ່ງຜົນສະທ້ອນທີ່ຈະຕາມມາພາຍຫຼັງຢ່າງຄັກແນ່.

ດັ່ງແຂວງວຽງຈັນໄດ້ອະນຸຍາດໃຫ້ບໍລິສັດເອກະຊົນໜຶ່ງເຂົ້າສຳປະທານເພື່ອພັດທະນາໂຄງການ ທົດລອງປູກໝາກເຍົາໃນບໍລິເວນດິນສວນງົ້ວຂອງ ດຣ.ວັນນະວົງ ຣາຊກຸນ ທີ່ບ້ານໜອງຂອນເມືອງໂພນໂຮງ, ແຂວງວຽງຈັນຈຶ່ງພາໃຫ້ເກີດຂໍ້ຂັດແຍ່ງເກີດຂຶ້ນ ແລະ ພາໃຫ້ເກີດມີຂໍ້ຂັດແຍ່ງຍ່ອຍຕາມມາອີກເລື້ອຍໆຈົນຮອ ດທຸກໆວັນນີ້.ໂດຍບໍ່ມີພາກສ່ວນໃດຮັບຜິດຊອບ,ຖິ້ມໄປຖິ້ມມາຂັ້ນລຸ່ມຖິ້ມໃຫ້ຂັ້ນເທິງ,ຂັ້ນເທິງຖິ້ມໃຫ້ຂັ້ນລຸ່ມ, ປະຊາຊົນຖິ້ມໃຫ້ພະນັກງານ, ພະນັກງານຖິ້ມໃຫ້ປະຊາຊົນ, ບໍລິສັດຖິ້ມໃຫ້ລັດ (ຂັ້ນແຂວງ), ລັດກໍ່ຍັງບໍ່ແກ້ໄຂ ປະໃຫ້ບັນຫາບານປາຍໄປເລື້ອຍໆ. ເກີດຜົນກະທົບເປັນຕ່ອງໂສ້ ,ເປັນວົງກວ້າງຕໍ່ຫຼາຍໆດ້ານບໍ່ວ່າຈະເປັນຕໍ່ ການປົກຄອງ, ຕໍ່ສັງຄົມ, ຕໍ່ເສດຖະກິດ ແລະ ຕໍ່ສິ່ງແວດລ້ອມຂອງບໍລິເວນທີ່ເກີດຂໍ້ຂັດແຍ່ງ.

# ສາລະບານ


| | |
|---|---|
| ບົດນຳ | I |
| ສາລະບານ | III |
| ຄວາມເປັນມາ | 1 |
| ບັນຫາທີ່ເກີດຂຶ້ນ | 1 |

## ຈຸດປະສົງ

ໃນການຂຽນບົດກໍລະນີສຶກສານີ້ກໍເພື່ອເຮັດແນວໃດໃຫ້ໄດ້ຮູ້ ແລະ ຖອດຖອນບົດຮຽນກ່ຽວກັບການແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນ. ອາດເຮັດໃຫ້ທ້ອງຖິ່ນທີ່ຍັງມີຄວາມສາມາດບໍ່ສູງນັ້ນ, ບໍ່ສາມາດຕີລາຄາບັນຫາໄດ້ດີ ແລະ ດຳເນີນການຜິດພາດ. ພາຍຫຼັງ, ກໍປັດຄວາມຮັບຜິດຊອບ ແລະ ເມີນເສີຍ. ສິ່ງຜົນເສຍຫາຍອັນໃຫຍ່ຫຼວງຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ເວົ້າລວມ. ເວົ້າສະເພາະ, ຕໍ່ບໍລິສັດ ກໍຄືຄອບຄົວຂອງປະຊາຊົນຜູ້ປະກອບທຸລະກິດດ້ວຍຄວາມເຄົາລົບຕໍ່ລະບຽບການຂອງບ້ານເມືອງມາຕະຫຼອດ. ເວັ້ນເສຍແຕ່ໄລຍະໜຶ່ງທີ່ມີການຂວ້າມຜ່ານໃນຄອບຄົວເຂົາເຈົ້າເທົ່ານັ້ນ. ໃນບົດແມ່ນຄອບຄົວຂອງ ທ. ວັນຊະນະ ຣາຊະຄົວ. ເພື່ອໃຫ້ເຂົ້າໃຈເລື່ອງລາວຂໍໃຫ້ອ່ານຄວາມເປັນມາຂອງເລື່ອງໃນຫົວຂໍ້ຖັດລົງໄປນີ້.

## ຄວາມເປັນມາ

ໃນປີ 1989 ດຣ. ວັນນະວົງ ຣາຊະກຸນ, ໄດ້ເຫັນແຈ້ງຕໍ່ແນວທາງນະໂຍບາຍໃນການຫັນການຜະລິດແບບທຳມະຊາດໄປເປັນການຜະລິດເປັນສິນຄ້າຂອງລັດຖະບານຈຶ່ງໄດ້ໄປພົວພັນກັບນາຍບ້ານບຸນຖັນ, ນາຍບ້ານ ບ້ານໜອງຂອນ, ຕາແສງສະກ້າ, ເມືອງໂພນໂຮງ, ແຂວງວຽງຈັນເພື່ອຂໍດິນສ້າງນິຄົມກະສິກຳປູກຕົ້ນງິ້ວ. ບ້ານໄດ້ຕົກລົງເອົາດິນລະຫວ່າງບ້ານໜອງຂອນຫາບ້ານຫ້ວຍເດື່ອໃຫ້ ໂດຍການເຫັນດີຂອງແຂວງອອກໃບມອບສິດໃຫ້ຊຶ່ງຕໍ່ມາໄດ້ອອກໃບແຈ້ງເນື້ອທີ່ດິນໃຫ້ມີເນື້ອທີ່ທັງໝົດ 1,900 ເຮັກຕາ (ໜຶ່ງພັນເກົ້າຮ້ອຍເຮັກຕາ)ຊຶ່ງຜູ້ກ່ຽວກໍໄດ້ປະຕິບັດພັນທະມາຕະຫຼອດ. ຫຼັງຈາກນັ້ນ, ຈຶ່ງໄດ້ຈັດຕັ້ງເປັນຮູບບໍລິສັດສ່ວນບຸກຄົນຂຶ້ນໂດຍໃສ່ຊື່ວ່າບໍລິສັດກະເສດສາດລາວຈຳກັດຂຶ້ນເພື່ອດຳເນີນທຸລະກິດໃຫ້ຖືກຕ້ອງຕາມກົດໝາຍ.

ໃນຊ່ວງກ່ອນປີ 2000 ກິດຈະການປູກຕົ້ນງິ້ວກໍບໍ່ຄືບໜ້າປານໃດ. ດັ່ງນັ້ນ, ນັບແຕ່ປີ 2000 ເປັນຕົ້ນມາຈົນຮອດປະຈຸບັນ, ທາງບໍລິສັດຈຶ່ງໄດ້ຫັນຈາກການປູກຕົ້ນງິ້ວມາເປັນການເຜົາຖ່ານໄມ້ປອງ ແລະ ໄມ້ກົມນ້ອຍເພື່ອສົ່ງອອກຕ່າງປະເທດ. ຈົນຕົກມາຮອດປີ 2004 ດຣ. ວັນນະວົງ ຣາຊະກຸນ, ປະທານ ບໍລິສັດຜູ້ເກົ່າໄດ້ເສຍຊີວິດລົງ. ຍາແມ່ ແພງພັນ ບຸດຕະໂລບົນ ຜູ້ເປັນເມຍຂອງ ດຣ. ວັນນະວົງ ຣາຊະກຸນຈຶ່ງໄດ້ອອກໃບມອບກຳມະສິດກິດຈະການທັງໝົດຂອງບໍລິສັດກະເສດສາດລາວຈຳກັດໃຫ້ເປັນກຳມະສິດຂອງ ທ່ານ ວັນຊະນະ ຣາຊະຄົວ ແລະ ນາງວາລິນ ພິລາວົງ ພວກກ່ຽວເປັນລູກຊາຍຄີງ ແລະ ລູກໄພ້ ຂອງ ດຣ. ວັນນະວົງ ຣາຊກຸນ (ນາງ ວາລິນ ພິລາວົງ ເປັນເມຍຂອງ ທ່ານ ວັນຊະນະ ຣາຊະຄົວ). ບໍລິສັດກະເສດສາດລາວຈຳກັດ ໄດ້ຖືກປັບປຸງຄືນໃໝ່ໂດຍ ນາງວາລິນ ພິລາວົງ ເປັນປະທານ ແລະ ທ່ານ ວັນຊະນະ ຣາຊະຄົວ ເປັນຮອງປະທານບໍລິສັດຄືນໃໝ່ໂດຍເຮັດໃບມອບກຳມະສິດ ແລະ ຈົດທະບຽນທີ່ສຳນັກງານທະບຽນສານແຂວງວຽງຈັນ. ຂະນະດຽວກັນ, ທາງອຳນາດການປົກຄອງບ້ານໜອງຂອນພັດເຂົ້າໃຈວ່າມໍລະດົກຈຶ່ງຕົກເປັນຂອງນາງ ແພວພັນ ສຸພະລັກ, ຜູ້ເປັນເມຍອີກຄົນໜຶ່ງຂອງ ດຣ. ວັນນະວົງ ຣາຊະກຸນ ແລ້ວນາງ ແພວພັນ ສຸພາລັກໄດ້ມອບ ກຳມະສິດໃຫ້ແກ່ທ້າວກົງແກ້ວເຊິ່ງເປັນພີ່ນ້ອງກັນ. ຈາກນັ້ນຈຶ່ງໄປຕັດແລວ ແລະ ວັດແທກນຳກັນກັບທ່ານກົງແກ້ວ ເຫັນວ່າເນື້ອທີ່ທັງໝົດມີພຽງ 148 ເຮັກຕາ ເທົ່ານັ້ນ. ຕໍ່ມາທ່ານວັນຊະນະ ຣາຊະຄົວ ເຊິ່ງເປັນລູກຊາຍຂອງ ດຣ. ວັນນະວົງ ຣາຊະກຸນ (ລູກລ້ຽງຂອງນາງແພວພັນ) ໄດ້ມາສະເໜີເອົາດິນບ່ອນດັ່ງກ່າວ ຈຳນວນ 1,900 ເຮັກຕາ ພຽງ 300 ເຮັກຕາ ເທົ່ານັ້ນ ໂດຍການອອກໃບແຈ້ງ ແລະ ເສຍຄ່າທຳນຽມທີ່ດິນຕ່າງໆຕາມລະບຽບກົດໝາຍໃນແຕ່ລະປີຕໍ່ໆໄປ, ເພື່ອເປັນບ່ອນປູກໄມ້ທົດແທນຮັບ ຮອງການປ້ອນວັດຖຸດິບຮັບໃຊ້ໂຮງງານ. ແຕ່ທາງບ້ານພັດບ່າຍບ່ຽງບັນຫາ ແລະ ອ້າງວ່າທາງບໍລິສັດກ

ະເສດສາດລາວຈຳກັດນີ້ຮຽກຮ້ອງເອົາຈຳນວນ 1,900 ເຮັກຕາ ຕາມໜັງສືຢັ້ງຢືນກຳມະສິດທີ່ດິນສະບັບລົງວັນທີ 23 ພຶດສະພາ 1989 ຊຶ່ງຕົວຈິງບໍ່ມີດິນຮອດ 1,900 ເຮັກຕາ ແລະ ໃຫ້ເຫດຜົນ ແລະ ອ້າງວ່າແຜນວາດນັ້ນ ດຣ. ວັນນະວົງ ຣາຊະກຸນ ແຕ້ມເອົາເອງ ແລະ ດັດແປງໃຫ້ຖືກກັບໃບມອບ ຂອງ ລັດ ໃນປີ 1989 ເທົ່ານັ້ນ. ແນວໃດກໍຕາມ, ໃນວັນທີ 6 ກໍລະກົດ 2005 ການຈັດຕັ້ງທີ່ກ່ຽວຂ້ອງຂັ້ນເມືອງ ແລະ ບ້ານໄດ້ເປີດກອງປະຊຸມກັນວ່າ ລັດຕ້ອງໄດ້ມອບດິນໃຫ້ຜູ້ສືບມູນຂອງ ດຣ. ວັນນະວົງ ຣາຊະກຸນ ເພາະດິນນີ້ໄດ້ຕົກລົງໃຫ້ເພິ່ນແລ້ວນັບແຕ່ປີ 1989 ແລະ ເພິ່ນກໍໄດ້ພັດທະນາ ແລະ ເສຍພັນທະມາຕະຫຼອດ, ແຕ່ຂໍໃຫ້ເພິ່ນປະກອບເອກະສານການສືບມູນເທົ່ານັ້ນ ແລະ ເສຍຄ່າທຳນຽມຕ່າງໆໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ .

ເພື່ອຄວາມຈະຈ່າງແຈ້ງ ແລະ ຊອກຫາເຫດຜົນວ່າເປັນຫຍັງດິນຈຶ່ງເຫຼືອໜ້ອຍແທ້ ຈາກ 1,900 ເຮັກຕາ ມາເປັນ 148 ເຮັກຕາ ແລະ ບໍ່ສາມາດໄດ້ຮັບມໍລະດົກຕົກທອດຂອງຜູ້ເປັນພໍ່ໃຫ້ນຳມາເປັນທຶນໃນການບໍລິຫານບໍລິສັດໃຫ້ໝັ້ນຄົງໄດ້ແມ່ນແຕ່ 300 ເຮັກຕາ ກໍບໍ່ສາມາດຮຽກຄືນມາໄດ້. ທາງບໍລິສັດກະເສດສາດລາວຈຳກັດກໍພໍຮູ້ເຫດຜົນວ່າດິນໄດ້ຖືກບຸກລຸກຫຍໍ້ເຂົ້າມາຫຼາຍດ້ານ ແລະ ຍ້ອນຫຼາຍຮູບການ ເຊັ່ນ: ປະຊາຊົນຫຍັບຮົ້ວເຂົ້າມາແລະທາງແຂວງໄດ້ອະນຸຍາດໃຫ້ໂຄງການອື່ນນຳໃຊ້ເຫຼົ່ານີ້ເປັນຕົ້ນ.ທ່ານປະທານບໍລິສັດກະເສດສາດລາວຈຳກັດຄົນໃໝ່ຈຶ່ງຕັດສິນໃຈຂຽນໃບສະເໜີສະບັບເລກທີ 0112/ບກສລ, ລົງ ວັນທີ 10 ກໍລະກົດ 2005 ຫາທ່ານຫົວໜ້າຫ້ອງການການເງິນເມືອງໂພນໂຮງເພື່ອໃຫ້ຮຽກປະຊຸມກັບພາກສ່ວນກ່ຽວຂ້ອງຊຶ່ງກໍໝາຍລວມເຖິງຜູ້ບຸກລຸກນັ້ນເອງເພາະເຫັນວ່າມີຄວາມສັບສົນຫຼາຍ. ທາງທ່ານຫົວໜ້າຫ້ອງ ການການເງິນເມືອງກໍໄດ້ສັ່ງໃຫ້ໜ່ວຍງານຊັບສິນ ແລະ ໜ່ວຍງານທີ່ດິນຮຽກເອົາພາກສ່ວນກ່ຽວຂ້ອງເຂົ້າປະຊຸມດ່ວນໃນເວລານັ້ນ.ຜົນສະຫຼຸບແນວໃດພັດບໍ່ໄດ້ແຈ້ງ ຫຼື ຕອບກັບມາທາງບໍລິສັດ. ເພື່ອຕິດຕາມຄວາມ ຄືບໜ້າທາງບໍລິສັດກໍໄດ້ພົວພັນກັບຫ້ອງການການເງິນ ແລະ ໄດ້ໄປປະຊຸມນຳກັນຕົກລົງໃຫ້ປະຊາຊົນ ແລະ ຜູ້ມີດິນບໍລິເວນນີ້ນຳເອົາໃບຢັ້ງຢືນມາເບິ່ງວ່າຖ້າຜູ້ໃດອອກລຸນ ວັນທີ 23 ພຶດສະພາ 1989 ຈະຕ້ອງກວດກາການໄດ້ມາຂອງດິນຄືນໃໝ່ແຕ່ການຈັດຕັ້ງປະຕິບັດພັດບໍ່ໄດ້ເຮັດ ແລະ ບໍ່ມີໃຜສາມາດຕອບບັນຫາໄດ້,ຊ້ຳບໍ່ໜຳຍັງຢັ້ງຢືນຕາມເນື້ອທີ່ເກົ່າຄື 148 ເຮັກຕາ ເຊັ່ນເດີມ. ເຫັນວ່າ ອຳນາດການປົກຄອງບໍ່ໄດ້ຈິງໃຈແກ້ໄຂບັນຫາ,ສາມເດືອນຕໍ່ມາທາງບໍລິສັດ ຈຶ່ງໄດ້ຂຽນໃບສະເໜີສະບັບເລກທີ 001/ບກສລ, ລົງວັນທີ 15 ຕຸລາ 2005 ຫາທ່ານເຈົ້າເມືອງ ເມືອງໂພນໂຮງເພື່ອໃຫ້ກວດກາເນື້ອທີ່ດິນຄືນໃໝ່.ທ່ານເຈົ້າເມືອງດັ່ງກ່າວກໍໄດ້ສັ່ງໃຫ້ອົງການກ່ຽວຂ້ອງຂັ້ນເມືອງລົງສົມທົບກັບເຂດ, ບ້ານລົງເບິ່ງຕົວຈິງ ແລ້ວລາຍງານຄືນໃຫ້ຕົນ, ແຕ່ທ່ານເຈົ້າເມືອງກໍບໍ່ໄດ້ມີຄຳຕອບອັນໃດໃຫ້ທາງບໍລິສັດເຊັ່ນກັນ.

ບັນຫາເກົ່າບໍ່ໄດ້ຖືກແກ້ໄຂ, ບັນຫາໃໝ່ຍິ່ງໂຫມແຮງຊ້ຳເຕີມ ເຖິງວ່າ ບໍລິສັດກະເສດສາດລາວຈຳກັດຈະເປັນບໍລິສັດທີ່ເກົ່າແກ່ ແລະ ມີຜົນງານໃນການພັດທະນາຕາມແນວທາງຂອງພັກ ແລະ ນະໂຍບາຍຂອງລັດໃນການຫັນການຜະລິດທຳມະຊາດໄປສູ່ການຜະລິດເປັນສິນຄ້າໃນອະດີດ ແລະ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນປະຈຸບັນ ໂດຍມີການປະກອບສ່ວນໃນການປະຕິບັດພັນທະ, ເວົ້າລວມ. ເວົ້າສະເພາະ, ການສົ່ງເສີມທ້ອງຖິ່ນຈ້າງແຮງງານ, ການຜະລິດເບ້ຍໄມ້ ແລະ ການຂົນສົ່ງຕ່າງໆເພື່ອປະກອບເປັນຕ່ອງໂສ້ການຜະລິດ ແລະ ບໍລິການຂອງບໍລິສັດ . ເນື້ອທີ່ດິນຕອນດັ່ງກ່າວ ໄດ້ຖືກອະນຸຍາດຈາກແຂວງໃຫ້ບໍລິສັດໜຶ່ງເຂົ້າມາສຳປະທານ.

ຮູບ: ປ້າຍໂຄງການທີ່ໄດ້ຮັບອະນຸຍາດໃຫ້ມາດຳເນີນຢູ່ບ່ອນດຽວກັນກັບດິນສວນງົ້ວຂອງ ທ. ວັນຊະນະ

ຣາຊະຄິວ.

ແລະ ນັບແຕ່ວັນທີ 08 ຕຸລາ 2007 ບໍລິສັດດັ່ງກ່າວກໍຂ້າມາບຸກເບີກເນື້ອທີ່ດິນ, ໄດ້ຖົມໜອງປາ ແລະ ມ້າງເອົາຮົ້ວໜາມໝາກຈັບທາງດ້ານໜ້າທາງໃຫຍ່ອອກ. ຕັດໄມ້ງິ້ວ ແລະ ຟືນ. ດັ່ງນັ້ນ, ທ່ານປະທານບໍລິສັດຈຶ່ງໄດ້ເຮັດໃບສະເໜີໃນວັນທີ 12 ທັນວາ 2007 ຫາທ່ານເຈົ້າແຂວງ ແຂວງວຽງຈັນຂໍໃຫ້ຢັບຢັ້ງບໍລິສັດດັ່ງກ່າວ.

ຮູບ: ການກໍ່ສ້າງອາຄານຫ້ອງການຂອງບໍລິສັດທີ່ໄດ້ຮັບສຳປະທານໃສ່ດິນສວນງິ້ວຂອງ ທ. ວັນຊະນະ ຣາຊະຄິວ ໂດຍບໍ່ມີການແຈ້ງ ຫຼື ໄດ້ຮັບອະນຸຍາດໃດໆຈາກລາວເລີຍ.

ໃນນາມສ່ວນຕົວ ທ່ານ ວັນຊະນະ ຣາຊະຄິວ ກໍໄດ້ເຂົ້າພົບກັບທ່ານເຈົ້າແຂວງ ແຂວງວຽງຈັນເພື່ອຊີ້ແຈງກ່ຽວກັບບັນຫາດິນສວນງິ້ວຢູ່ບ້ານໜອງຂອນນີ້. ຈາກນັ້ນ, ທາງແຂວງກໍໄດ້ແຕ່ງຕັ້ງຄະນະກຳມະການເກັບກຳຂໍ້ມູນ ແລະ ຄົ້ນຄວ້າບັນຫາການນຳໃຊ້ດິນຢູ່ ບ້ານໜອງຂອນເມືອງໂພນໂຮງຂຶ້ນໜຶ່ງຊຸດ ວັນທີ 10 ມັງກອນ 2008. ແຕ່ຜົນການເກັບກຳຂໍ້ມູນ ແລະ ແກ້ໄຂບັນຫານັ້ນບໍ່ມີຄວາມຄືບໜ້າແນວໃດເລີຍ. ດັ່ງນັ້ນ, ທ່ານປະທານບໍລິສັດຈຶ່ງໄດ້ຕັດສິນໃຈເຮັດໃບສະເໜີອີກສະບັບໜຶ່ງໃນວັນທີ 10 ພຶດສະພາ 2008 ເພື່ອທວງຖາມຄວາມຄືບໜ້າໃນການພິຈາລະນາຕໍ່ໃບສະເໜີສະບັບເລກທີ 12 ທັນວາ 2007 ຜ່ານມາ. ພໍໄປທວງຖາມນຳບຸກຄົນຜູ້ມີຄວາມຮັບຜິດຊອບກໍແຕ່ບ່າຍບ່ຽງບັນຫາວ່າ ໃຫ້ລໍອັນນັ້ນ, ຖ້າຜ່ານອັນນີ້ໄປເລື້ອຍໆ ຢ່າງບໍ່ມີກຳນົດ.

ໃນທ້າຍປີ 2009 ນີ້, ທ່ານ ວັນຊະນະ ຣາຊະຄິວໄດ້ພະຍາຍາມຕິດຕໍ່ຫາຜູ້ເຂົ້າມາບຸກລຸກຈາກອົງການວິທະຍາສາດ ແລະ ເຕັກໂນໂລຊີ. ເພາະວ່າເປັນໂຄງການກ່ຽວກັບການຄົ້ນຄວ້າທົດລອງປູກພືດ ພະລັງງານທົດແທນ ແຕ່ກໍໄດ້ຂໍ້ມູນກ່ຽວກັບບໍລິສັດດັ່ງກ່າວ, ພໍຕິດຕໍ່ທາງໂທລະສັບຫາເບີຕິດຕໍ່ທີ່ສະແດງໃນປ້າຍໂຄສະນາພັດໄດ້ຮັບການປະຕິເສດ ແລະ ບໍ່ໃຫ້ຄວາມຮ່ວມມື. ອ້າງວ່າໄດ້ຮັບສຳປະທານຈາກແຂວງ. ທ່າອ່ຽງຂອງຄວາມຂັດແຍ່ງຄືດັ່ງໄດ້ກ່າວໄປແລ້ວໃນຄວາມເປັນມາຂອງຂໍ້ຂັດແຍ່ງກໍລະນີດິນສວນງິ້ວບ້ານໜອງຂອນຂ້າງ ເທິງນີ້ ເຫັນວ່າມັນເລີ່ມປະກົດຂຶ້ນນັບຕັ້ງແຕ່ ດຣ. ວັນນະວົງ ຣາຊະກຸນ ໄດ້ເສຍຊີວິດໃນປີ 2004, ຜູ້ເປັນລູກຄື ທ. ວັນຊະນະ ຣາຊະຄິວ ໃນຖານະຜູ້ຮັບມູນມໍລະດົກກໍ່ຕ້ອງການໄດ້ຕາມຈຳນວນທີ່ພໍ່ໄດ້ປະໄວ້ໃຫ້.ແຕ່ເກີດເຫດການສັບສົນຂຶ້ນໃນຄອບຄົວໃຫຍ່ມີຫຼາຍຝ່າຍຕ້ອງການຍາດແຍ່ງດ້ວຍວິທີຕ່າງໆນາໆປະກົດວ່າ ທ.ວັນຊະນະ ຣາຊຄິວ ຈະບໍ່ໄດ້ດິນຕາມຈຳນວນທີ່ພໍ່ໄດ້ປະໄວ້ໃຫ້ຈຶ່ງຮຽກຮ້ອງໃຫ້ ພາກ ສ່ວນກ່ຽວຂ້ອງກໍ່ຄືອຳນາດການປົກຄອງບ້ານ ແລະ ເມືອງ ເພື່ອກວດກາ. ເຫດໃດ ຊ້ຳບໍ່ໄດ້ຊ່ອຍເຫຼືອ ພັດມີການຍາດແຫຍ້ ແລະປະຕິເສດ,ຂະນະດຽວກັນພັດຖືກສົງໄສວ່າໄປໃຫ້ຂໍ້ມູນແກ່ແຂວງກ່ຽວກັບດິນຕອນນີ້ວ່າບໍ່ມີໃຜຄອບຄອງ.ທາງແຂວງຈຶ່ງໄດ້ມອບໃຫ້ບໍລິສັດອື່ນເຂົ້າມາສຳປະທານເຮັດໂຄງການທົດລອງປູກພືດພະລັງງານທົດແທນ. ດັ່ງສະແດງໃນຮູບເປັນຈຸດທີ 3 ເຫັນວ່າ ຄວາມຂັດແຍ່ງຍົກລະດັບສູງຂຶ້ນຈາກເດີມ. ເຮັດໃຫ້ ທ. ວັນຊະນະ ຣາຊຄິວຂຽນໜັງສືຫາແຂວງຕັ້ງ 2 ຄັ້ງໃນເລື່ອງດຽວກັນ, ແຕ່ກໍ່ບໍ່ໄດ້ຄຳຕອບ ຈົນເຖິງທຸກວັນນີ້. ທ່າອ່ຽງຂອງຂໍ້ຂັດແຍ່ງສາມາດເປັນໄປໄດ້ຢ່າງໜ້ອຍ 3 ທາງ ຄື: ໃນຂໍ້ 4.1 ຖ້າວ່າ ທ. ວັນຊະນະ ຣາຊຄິວ ຕັດສິນໃຈຟ້ອງສານ ຫຼື ເຂົ້າລາຍງານຕໍ່ລັດຖະບານສູນກາງ. ທາງແຂວງ ແລະ ບໍລິສັດດັ່ງກ່າວຈະຈັບຕົວສຳພັນກັນເພື່ອຕໍ່ສູ້ ເຮັດໃຫ້ຄວາມຮຸນແຮງຍິ່ງສູງຂຶ້ນ. ທາງທີສອງ ໃນຂໍ້ 4.2 ຖ້າ ທຸກຝ່າຍຫາກປ່ອຍປະໄວ້ ຄວາມຂັດແຍ່ງກໍຍັງບໍ່ຖືກແກ້ໄຂ ແລະ ຈະຄ່ອຍໆກະທົບໄປເລື້ອຍໆ ແບບຊ້າໆ ສົ່ງຜົນກະທົບໄປເລື້ອຍໆ. ໃນຂໍ້ 4.3 ຖ້າທຸກຝ່າຍຫັນໜ້າມາລົມກັນ ຫາເຫດຫາຜົນນຳກັນ ກ້າຮັບຜິດຮັບຊອບ ແລ້ວແກ້ໄຂຮ່ວມກັນ.

ເຖິງວ່າຂໍ້ຂັດແຍ່ງຈະບໍ່ປິດແຈບ, ແຕ່ກໍ່ພໍປົວແປງຄວາມຮູ້ສຶກ ແລະ ຈິງໃຈໃຫ້ບົດຮຽນເຊິ່ງກັນ ແລະ ກັນ, ຍອມຮັບໃນຂໍ້ຂັດແຍ່ງ ແລະ ພັດທະນາວິທີການທີ່ດີທີ່ສຸດສໍາລັບຂັ້ນຕອນການອະນຸມັດສໍາປະທານ, ການແກ້ໄຂຂໍ້ຂັດແຍ່ງ ແລະ ເບິ່ງເຖິງຄວາມຮັບຜິດຊອບຂອງແຕ່ລະຂັ້ນຄືນກໍຈະເປັນບົດຮຽນອັນລໍ້າຄ່າ. ດັ່ງຄໍາສອນທີ່ວ່າ: ເບິ່ງຫົວຊ້າງໃຫ້ເຫັນຫາງນັ້ນເອງ.

ປະເດັນຂອງຄວາມຂັດແຍ່ງ

-ປະເດັນຂອງຄວາມຂັດແຍ່ງດິນສວນງິ້ວຢູ່ບ້ານໜອງຂອນ, ເມືອງໂພນໂຮງ, ແຂວງວຽງຈັນນີ້ ມີຫຼາຍປະເດັນ ແລະ ສັບສົນຫຼາຍ ເພື່ອໃຫ້ຜູ້ອ່ານເຂົ້າໃຈ ຂໍຍົກບາງປະເດັນເດັ່ນໆດັ່ງລຸ່ມນີ້:

-ມີບຸກຄົນຢູ່ບ້ານໜອງຂອນສວຍໂອກາດ.

ເມື່ອຕອນ ດຣ. ວັນນະວົງ ຣາຊະກຸນ ຍັງມີຊີວິດ. ການດໍາເນີນກິດຈະການກໍເປັນໄປໄດ້ດີ, ການກວດກາດູແລຂອບເຂດຊາຍແດນກໍ່ເຮັດໄດ້ດີ,ຊາວບ້ານຢູ່ໃກ້ຄຽງນັບທັງຜູ້ຫຼັກຜູ້ໃຫຍ່ຂອງບ້ານກໍນັບຖືຈຶ່ງບໍ່ກ້າຫຍັບເອົາດິນເພິ່ນ. ປະຊາຊົນໃນບ້ານໜອງຂອນກໍຮັບຮູ້ວ່າ ນອກຈາກ ນາງ ແພງພັນ ບຸດຕະໂລບົນ ຊຶ່ງມີລູກນໍາກັນ ຊື່ ທ້າວ ວັນຊະນະ ຣາຊຄິວ ດຣ. ວັນນະວົງ ຣາຊະກຸນ ຍັງມີເມຍອີກຄົນໜຶ່ງຊື່ ນາງ ແພວພັນ ສຸພາລັກ. ດັ່ງນັ້ນ, ເມື່ອ ດຣ. ວັນນະວົງ ຣາຊະກຸນ ເສຍຊີວິດໄປໃນປີ 2004, ບຸກຄົນບໍ່ດີຈໍານວນໜຶ່ງຜູ້ຫວັງກອບໂກຍເອົາດິນສວນງິ້ວຈຶ່ງສວຍໂອກາດຫຍັບເອົາດິນ ແລະ ຢັ້ງຢືນຮັບຮູ້ວ່າດິນເປັນຂອງນາງ ແພວພັນ ສຸພາລັກ ແລະ ມອບກໍາມະສິດຕໍ່ໃຫ້ທ້າວກົງແກ້ວແທນ. ສ່ວນທ້າວກົງແກ້ວກໍເຫັນວ່າຕົນຈະໄດ້ ດິນທີ່ເຫຼືອຈຶ່ງພ້ອມກັນໄປວັດແທກ ແລະ ຢັ້ງຢືນນໍາກັນວ່າດິນສວນງິ້ວຢູ່ບ້ານໜອງຂອນເຫຼືອພຽງ 148 ເຮັກຕາ. ທັງນີ້, ຍ້ອນທ້າວ ວັນຊະນະ ຣາຊະຄິວ ກໍບໍ່ຮູ້ຄັກແນ່ວ່າຂອບເຂດດິນຮອດບ່ອນໃດແທ້ໆ.

- ການເກັບກໍາຂໍ້ມູນກ່ຽວກັບດິນເພື່ອອະນຸຍາດສໍາປະທານຂອງແຂວງ, ເມືອງ ແລະ ບ້ານບໍ່ຊັດເຈນ

ໃນການອະນຸຍາດໃຫ້ສໍາປະທານທີ່ດິນແກ່ບໍລິສັດໃດໜຶ່ງເພື່ອດໍາເນີນກິດການນັ້ນ, ຕ້ອງໄດ້

ເຮັດບົດສະເໜີໂຄງການ, ຊຽນບົດວິພາກເສດຖະກິດ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງໃນຂະບວນການສ້າງເອກະສານເຫຼົ່ານີ້, ມີຄວາມຈໍາເປັນຕ້ອງໄດ້ເກັບກໍາຂໍ້ມູນຢ່າງລະອຽດ ຈາກປະຊາຊົນໃກ້ຄຽງ. ຊຶ່ງແທບຈະເປັນໄປບໍ່ໄດ້ເລີຍວ່າ ຈະບໍ່ຮູ້ກ່ຽວກັບກໍາມະສິດຄອບຄອງຂອງດິນທີ່ຈະອະນຸຍາດໃຫ້ບໍລິສັດໃດໜຶ່ງສໍາປະທານ. ເວັ້ນເສຍແຕ່, ບໍ່ໄດ້ສ້າງເອກະສານເຫຼົ່ານັ້ນຢ່າງແທ້ຈິງ. ແນວໃດກໍຕາມ, ພະນັກງານຜູ້ຮັບຜິດຊອບໃນການພິຈາລະນາອະນຸມັດໂຄງການສໍາປະທານຕ້ອງໄດ້ອ່ານ ແລະ ກວດກາບົດສະເໜີກ່ອນຈະເຮັດຂໍ້ຕົກລົງໃຫ້ບໍລິສັດໃດໜຶ່ງສໍາປະທານ. ສໍາລັບກໍລະນີນີ້, ການອະນຸມັດສໍາປະທານນັ້ນທາງ

ແຂວງບໍ່ໄດ້ເກັບກໍາຂໍ້ມູນລະອຽດ. ເພາະວ່າ ພໍເກີດບັນຫາຂຶ້ນແລ້ວ, ບໍລິສັດກະເສດສາດລາວຊຽນໃບສະເໜີໄປຫາກໍວ່າຂັ້ນລຸ່ມກໍວ່າເປັນຄໍາສັ່ງຂອງຂັ້ນເທິງ, ນໍາໄປຫາຂັ້ນເທິງກໍບອກວ່າ

ຂັ້ນລຸ່ມໃຫ້ຂໍ້ມູນມາຜິດ. ແຕ່ພໍຮູ້ວ່າຂໍ້ມູນຜິດ ພັດບໍ່ແກ້ໄຂໃຫ້ຖືກຕ້ອງ, ຍິ່ງປ່ອຍປະໃຫ້ບັນຫາບານປາຍອອກໄປເລື້ອຍໆ. ເຫັນແຕ່ຄວາມສຳຄັນວ່າ ການອະນຸຍາດສຳປະທານເປັນແນວທາງຫັນດິນເປັນທຶນຂອງລັດຖະບານ ວ່າຈະໄດ້ລາຍຮັບມະຫາສານ ແຕ່ພັດບໍ່ໄດ້ເບິ່ງວ່າ ດິນທີ່ຈະອະນຸຍາດໃຫ້ສຳປະທານນັ້ນມີຢູ່ໃສ, ເປັນຂອງໃຜ, ເໝາະສົມຈະເຮັດອັນໃດກວ່າອັນໃດ. ຂາດການເບິ່ງຜົນສະທ້ອນໃນມຸມກວ້າງ, ໃນໄລຍະຍາວວ່າຈະມີຜົນຕາມມາແນວໃດ, ໃຜໄດ້ຜົນປະໂຫຍດ, ໃຜເສຍຜົນປະໂຫຍດ. ບັນຫາສັງຄົມເດເປັນແນວໃດ, ບັນຫາເສດຖະກິດເດເປັນແນວໃດ, ບັນຫາສິ່ງແວດລ້ອມເດເປັນແນວໃດ. ເຮັດອັນໃດຍືນຍົງກວ່າອັນໃດ. ເຫັນ ບັນຫາພັດບໍ່ຮີບແກ້ໄຂປ່ອຍປະລະເລີຍ ແບບວ່າເຫັນຫົວບໍ່ເຫັນຫາງນັ້ນເອງ.

ເຖິງວ່າອາດຈະມີບາງປະເດັນອີກປີກຍ່ອຍແຕ່ກໍ່ບໍ່ເປັນຮູບປະທຳປານໃດຈຶ່ງບໍ່ໄດ້ກ່າວໃນລາຍລະອຽດເຊັ່ນວ່າມີສາຍເຫດອັນໃດຈຶ່ງເຮັດໃຫ້ພະນັກງານລັດຜູ້ຮັບຜິດຊອບຕໍ່ການອະນຸຍາດສຳປະທານທີ່ດິນໃນບໍລິເວນເຂດບ້ານໜອງຂອນນີ້ຕ້ອງກະທຳຜິດເອົາດິນຂອງ ທ. ວັນຊະນະ ຣາຊະຄືວ ໃຫ້ບໍລິສັດອື່ນສຳປະທານ, ມັນມີຄວາມສຳພັນພິເສດອັນໃດບໍ່? ເຕັກນິກໃນການວັດແທກດິນໃນຊ່ວງປີ 1989 ມັນຕໍ່າຈົນວ່າວັດແທກຜິດຫຼາຍກວ່າ 1000% ປານນັ້ນແທ້ບໍ່? ເຫຼົ່ານີ້ເປັນຕົ້ນ. ແຕ່ແນວໃດກໍ່ຕາມ, ຈາກປະເດັນທີ່ສຶກສາມາກໍ່ພໍສາມາດຖອດຖອນບົດຮຽນຈາກກໍລະນີສຶກສາບົດນີ້ໄດ້ດັ່ງຕໍ່ລົງໄປນີ້.

ບົດຮຽນທີ່ຖອດຖອນໄດ້

- ການປ່ອຍປະບັນຫາໄວ້ຂອງພາກລັດຈະເຮັດໃຫ້ບັນຫາບານປາຍ ແລະ ກະທົບທັງລວງເລິກ ແລະ ລວງກວ້າງໜັກຕື່ມຂຶ້ນທຸກໆວັນ. ທ. ວັນຊະນະ ຣາຊຄືວ ຜູ້ທີ່ໄດ້ຈົດທະບຽນວິສາຫະກິດເປັນນິຕິບຸກຄົນອາດຕັດສິນໃຈກະທຳສິ່ງໃດໜຶ່ງທີ່ເຫັນວ່າເປັນຜົນປະໂຫຍດກໍ່ບໍລິສັດຕົນ ແຕ່ມັນອາດຈະກະທົບຕໍ່ອົງການຈັດຕັ້ງລັດໃນຂັ້ນທ້ອງຖິ່ນ. ສະນັ້ນ, ການເຫັນບັນຫາຂໍ້ຂັດແຍ່ງຕ້ອງຟ້າວແກ້ໄຂກັບທີ່ ແລະ ໃຫ້ທັນເວລາ, ກ່ອນທີ່ມັນຈະມາເຖິງຕົວ.

- ການບໍ່ຮັບຜິດຊອບຕໍ່ໜ້າທີ່ຂອງພະນັກງານຈະສົ່ງຜົນກະທົບຕໍ່ບົດບາດການນຳພາຂອງລັດ. ໂດຍສະເພາະ, ໃນປະຈຸບັນ ທ. ວັນຊະນະ ຣາຊຄືວ ແລະ ຄອບຄົວເລີ່ມໝົດຄວາມຫວັງຕໍ່ການແກ້ໄຂບັນຫາຂອງຂັ້ນແຂວງແລ້ວ. ລາວເລີ່ມບໍ່ໄວ້ວາງໃຈຕໍ່ການປະຕິບັດໜ້າທີ່ຂອງຂັ້ນແຂວງແລ້ວ, ສະແດງອອກຢູ່ບ່ອນວ່າລາວໄດ້ໄປປຶກສາກັບຫຼາຍໆຄົນໃນຂັ້ນສູນກາງເຖິງວິທີການແກ້ໄຂທີ່ຈະເປັນປະໂຫຍດແກ່ທຸກຝ່າຍ. ເພາະລາວກໍ່ຍັງຢາກຮັກສາຄວາມສຳພັນກັບແຂວງໄວ້ ເຫດຜົນວ່າບໍລິສັດຂອງ ລາວກໍ່ໄດ້ສ້າງຕັ້ງຢູ່ແຂວງນີ້.ແຕ່ການສະເໜີຫາຂັ້ນສູງກາງເປັນພຽງທາງເລືອກ (ທາງບໍລິຫານ) ທາງດຽວທີ່ພໍຈະເປັນທາງອອກໃຫ້ລາວ. ການສະເໜີນັ້ນອາດຈະກະທົບຕໍ່ການປະຕິບັດໜ້າທີ່ຂອງພະນັກ ງານຂັ້ນສູງຂອງແຂວງກໍ່ເປັນໄດ້.

- ຂໍ້ຂັດແຍ່ງໜຶ່ງສາມາດສ້າງໃຫ້ເກີດຂໍ້ຂັດແຍ່ງອື່ນໆຕາມມາ. ເພາະວ່າ, ໃນສະຖານະການທີ່ເກີດມີຄວາມຂັດແຍ່ງແລ້ວພາກສ່ວນທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງໂດຍກົງຈະພະຍາຍາມສ້າງຜົນປະໂຫຍດໃຫ້ຕົນເອງ, ພາກສ່ວນອື່ນອີກກໍພະຍາຍາມປ້ອງກັນ. ແຕ່ລະຝ່າຍຕ່າງກໍມີຍຸດທະສາດຂອງຕົນ, ເຮັດໃຫ້ຂໍ້ຂັດແຍ່ງຍົກລະດັບຄວາມຮຸນແຮງຂຶ້ນ ແລະ ແຜ່ຂະຫຍາຍອອກເປັນວົງກວ້າງ. ແນວໃດກໍຕາມ, ຂໍ້ຂັດແຍ່ງ ມັນກໍເປັນພະລັງງານທີ່ກະຕຸກໃຫ້ເກີດການພັດທະນາດ້ານຕ່າງໆທີ່ກ່ຽວຂ້ອງໃນຮອບຕໍ່ໆໄປເຊັ່ນ: ແນວທາງໃນການອະນຸມັດສຳປະທານ, ແນວທາງໃນການແກ້ໄຂບັນຫາ ແລະ ກອບກົດໝາຍເພື່ອກຳນົດວິທີການໃນການປ້ອງກັນຂໍ້ຂັດແຍ່ງ ເຫຼົ່ານີ້ເປັນຕົ້ນ.

Rights-LINK

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານ ໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີ່ແມວ: info@rightslinklao.org
www.rightslinklao.org